Lao/ລາວ

AEC Australian Electoral Commission

# ຢຸດ ແລະ ພິຈາຣະນາ

ໃນລະຫວ່າງການເລືອກຕັ້ງຂອງລັດຖະບານກາງ ມີສິ່ງທີ່ເວົ້າແລະຂຽນກ່ຽວກັບຂະບວນການລົງຄະແນນສຽງຢ່າງຫຼວງຫຼາຍເຊິ່ງ**ບາງສ່ວນອາດຈະເປັນຄວາມເທັດ ຫຼື ເຮັດໃຫ້ເຂົ້າໃຈຜິດ.**

ຢຸດແລະພິຈາລະນາເນື້ອຫາແລະແຫຼ່ງທີ່ມາຂອງສິ່ງທີ່ທ່ານເຫັນ ໄດ້ຍິນ ຫຼື ອ່ານກ່ຽວກັບຂະບວນການ.

ຂໍ້ຄວາມ, ຮູບພາບ, ວິດີໂອ ແລະ ສຽງທີ່ສ້າງຂຶ້ນໂດຍ AI ອາດຖືກໃຊ້ເພື່ອພະຍາຍາມຫຼອກລວງທ່ານກ່ຽວກັບບ່ອນທີ່ຈະລົງຄະແນນສຽງ, ວິທີການຂຽນຕື່ມເຈັ້ຍລົງຄະແນນສຽງ ຫຼື ເປັນຫຍັງຂະບວນການດັ່ງກ່າວອາດຈະບໍ່ເປັນໜ້າເຊື່ອຖືໄດ້. **ທຸກຄົນສາມາດໄດ້ຮັບຜົນກະທົບ.**

ນຳໃຊ້ຄວາມສົງໄສຢ່າງມີເຫດຜົນ. ກວດເບິ່ງ ຫຼື ບໍ່ສົນໃຈມັນ, ແຕ່ຢ່າແບ່ງປັນ ຫຼື ໂພສຕ໌ຊ້ຳ. ນອກນັ້ນທ່ານຍັງສາມາດລາຍງານກັບໄປຫາສະຖານທີ່ທີ່ທ່ານເຫັນຂໍ້ມູນນັ້ນ. ສະໜັບສະໜູນໝູ່ເພື່ອນແລະຄອບຄົວເພື່ອໃຫ້ເຮັດເຊັ່ນດຽວກັນ.

ອອສເຕຣເລັຍມີລະບົບການເລືອກຕັ້ງທີ່ເຊື່ອຖືໄດ້ຫຼາຍທີ່ສຸດແຫ່ງໜຶ່ງໃນໂລກ. ມັນເປັນຂອງຜູ້ມີສິດລົງຄະແນນສຽງ ແລະ ພວກເຮົາທຸກຄົນມີຄວາມຮັບຜິດຊອບໃນການປົກປ້ອງລະບົບນີ້.

## ຢ່າສ່ຽງກັບສິ່ງທີ່ພວກເຮົາມີ.

### ກວດເບິ່ງເນື້ອຫາ

**ຊອກຫາ:**

- ຄຳເວົ້າທີ່ເຮັດໃຫ້ເກີດຄວາມຮູ້ສຶກທີ່ຮຸນແຮງ, ເຊັ່ນ: ຕົກໃຈ, ຄວາມໂກດເຄືອງ ຫຼື ຄວາມຕື່ນເຕັ້ນ
- ມີທາງເລືອກຈຳນວນນ້ອຍທີ່ຖືກນຳສະເໜີແທນທີ່ຈະເປັນທັງໝົດ
- ການຕຳນິຕິຕຽນກຸ່ມ ຫຼື ບຸກຄົນໃດໜຶ່ງໂດຍສະເພາະທີ່ບໍ່ແມ່ນບຸກຄົນ/ກຸ່ມດຽວທີ່ຮັບຜິດຊອບ
- ໂຈມຕີບຸກຄົນແທນທີ່ຈະສຸມໃສ່ການໂຕ້ຖຽງ.

### ກວດເບິ່ງແຫຼ່ງຂ່າວ

**ຖາມຕົວທ່ານເອງ:**

- ຂໍ້ມູນນັ້ນມາຈາກໃສ? ມັນມາຈາກແຫຼ່ງທີ່ເຊື່ອຖືໄດ້ບໍ?
- ມາຈາກອອສເຕຣເລັຍ ຫຼື ຕ່າງປະເທດບໍ?
- ອາດຈະເປັນ AI ຫຼືບໍ? ເຕັກໂນໂລຊີ AI ເຮັດໃຫ້ສ້າງຂໍ້ຄວາມ ຮູບພາບ ວິດີໂອ ແລະ ສຽງທີ່ເປັນ ຄວາມເທັດໄດ້ໂດຍງ່າຍ.
- ເປັນຫຍັງມັນຖືກເຜີຍແຜ່? ມີເຫດຜົນໃດຫຼືບໍ່ທີ່ບາງຄົນອາດຈະພະຍາຍາມໂນ້ມນ້າວໃຫ້ທ່ານເຊື່ອໃນສິ່ງທີ່ບໍ່ເປັນຄວາມຈິງ?

### ກວດເບິ່ງເວັບໄຊທ໌ຂອງພວກເຮົາ

**ຮັບຂໍ້ມູນອັນແທ້ຈິງ:**

- ລົງຄະແນນສຽງເມື່ອໃດ
- ຄະແນນສຽງຈະຖືກນັບແນວໃດ
- ຜົນໄດ້ຮັບຖືກຕັດສິນແນວໃດ
- AEC ເກັບຮັກສາການລົງຄະແນນສຽງໃຫ້ປອດໄພໄດ້ແນວໃດ.




aec.gov.au 13 23 26

ຕິດຕາມພວກເຮົາ ເພື່ອໄດ້ຍິນຈາກພວກເຮົາໂດຍກົງ

ໄດ້ຮັບອະນຸຍາດຈາກກຳມາທິການການເລືອກຕັ້ງ, ແຄນເບີຣາ
Authorised by the Electoral Commissioner, Canberra

25-2108